ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------

ທະນາຄານແຫ່ງ ສປປ ລາວ

ເລກທີ: 14 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 17 ມີນາ 2017

ສຳນັກງານ ຄຄຊ
ຮັບ ເລກທີ.....0315.......
ວັນທີ..21 MAR 2017......
ໂທລະສັບ 021 217770

## ບົດບັນທຶກກອງປະຊຸມ

ໃນຕອນເຊົ້າຂອງວັນທີ 7 ມີນາ 2017 ເວລາ 08:30 ໂມງ ຢູ່ທີ່ຫ້ອງປະຊຸມໃຫຍ່ຊັ້ນ IV, ທະນາຄານແຫ່ງ ສປປ ລາວ ໄດ້ຈັດກອງປະຊຸມສ່ອງແສງສາຍລັດ ປະຈຳເດືອນ ກຸມພາ 2017 ພາຍໃຕ້ການເປັນປະທານຂອງທ່ານ ຄຳວົງ ທິບພະວົງ ຮອງຜູ້ວ່າການ ທຫລ, ຜູ້ເຂົ້າຮ່ວມປະກອບດ້ວຍບັນດາຄະນະກົມ ແລະ ທຽບເທົ່າກົມ; ຜູ້ອຳນວຍການ ແລະ ຮອງຜູ້ອຳນວຍການທະນາຄານທຸລະກິດລັດ (ດັ່ງລາຍຊື່ຄັດຕິດມາພ້ອມນີ້).

ຈຸດປະສົງຂອງກອງປະຊຸມ ແມ່ນເພື່ອທົບທວນການຈັດຕັ້ງປະຕິບັດວຽກງານໃນໄລຍະ 1 ເດືອນຜ່ານມາ ໂດຍການລາຍງານສະພາບພົ້ນເດັ່ນຈາກບັນດາກົມ-ທຽບເທົ່າກົມ ແລະ ທະນາຄານທຸລະກິດລັດ.

ຜ່ານການຮັບຟັງການລາຍງານ ແລະ ພິຈາລະນາແຕ່ລະວຽກງານທີ່ຕິດພັນກັບບັນດາກົມ ແລະ ທະນາຄານທຸລະກິດລັດ ກອງປະຊຸມໄດ້ຕີລາຄາການຈັດຕັ້ງປະຕິບັດວຽກງານແຕ່ລະດ້ານ ດັ່ງນີ້:

### I. ສະພາບພົ້ນເດັ່ນຂອງເດືອນຜ່ານມາ

ໃນໄລຍະ 1 ເດືອນຜ່ານມາ ເຫັນວ່າບັນດາກົມ-ທຽບເທົ່າກົມ ແລະ ທະນາຄານທຸລະກິດລັດ ໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນເປັນຢ່າງດີ ເຊິ່ງສະແດງອອກໃນແຕ່ລະດ້ານ: ດ້ານແນວຄິດການເມືອງທົ່ວລະບົບຂະແໜງການທະນາຄານມີຄວາມສະຫງົບປົກກະຕິ; ເອົາໃຈໃສ່ໃນການຈັດຕັ້ງປະຕິບັດວຽກງານວິຊາສະເພາະໄດ້ດີສົມຄວນ ເປັນຕົ້ນ: ການຮັກສາສະຖຽນລະພາບເງິນຕາແຫ່ງຊາດໄວ້ໄດ້ຢ່າງໝັ້ນທ່ຽງ, ລະບົບທະນາຄານ ແລະ ສະຖາບັນການເງິນຍັງສືບຕໍ່ເຄື່ອນໄຫວປົກກະຕິ. ທະນາຄານທຸລະກິດລັດ ໄດ້ເຮັດສຳເລັດຫຼາຍດ້ານເຊັ່ນ: (1) ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ສຳເລັດການເຊັນບົດບັນທຶກຊ່ວຍຈຳ ກັບ ສປ. ຈີນ ກ່ຽວກັບການບໍລິການປຶກສາດ້ານຫຼັກຊັບ; (2) ທະນາຄານພັດທະນາລາວ ສຳເລັດການຄົ້ນຄວ້າຂຶ້ນແຜນເພື່ອຊອກຊ່ອງທາງແກ້ໄຂໜີ້ສິນ NPL ໂດຍຈັດປະຊຸມຮ່ວມກັນລະຫວ່າງ ຝ່າຍຮັບຜິດຊອບວຽກງານສິນເຊື່ອຂອງສຳນັກງານໃຫຍ່ ແລະ ສາຂາໃນທຸກໆເດືອນ; (3) ທະນາຄານສົ່ງເສີມກະສິກຳ ສຳເລັດການຂຶ້ນແຜນປັບປຸງລະບຽບຫຼັກຊັບການໃຫ້ສິນເຊື່ອລາຍຫຍ່ອຍ, ທົບທວນຄືນສຳລັບໂຄງການທີ່ປ່ອຍເງິນກູ້ໃນໄລຍະຜ່ານມາ ແລະ ສຸມໃສ່ຊຸກຍູ້ການປູກພືດລະດູແລ້ງໃຫ້ແກ່ລັດຖະບານ.

### II. ບັນດາວຽກງານທີ່ຍົກຂຶ້ນມາ

1. ວຽກງານ ສຄຄຊ: (1) ຄົ້ນຄວ້າ ແລະ ກະກຽມບໍລິສັດລາວໂທລະຄົມເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວໃຫ້ໄດ້ໃນງວດ 2 ຫຼື ງວດ 3. (2) ຄົ້ນຄວ້າ ແລະ ທົບທວນເພີ່ມເຕີມອີກ ຈຳນວນ 2 ບໍລິສັດ ຄື: (ກ) ບໍລິສັດມະຫາຊົນເຊົ່າສິນເຊື່ອ ເຊິ່ງຢູ່ໃນຂັ້ນຕອນສົມທົບກັບກົມຄຸ້ມຄອງສະຖາບັນການເງິນ; (ຂ) ບໍລິສັດພູສີກໍ່ສ້າງ ແມ່ນທົບທວນເພີ່ມເຕີມດ້ານບັນຊີ ເນື່ອງຈາກຕິດພັນກັບໂຄງການລັດຖະບານເປັນສ່ວນໃຫຍ່. (3) ກະກຽມຄວາມພ້ອມທຸກດ້ານ ໃນການກະກຽມໃຫ້ແກ່ການເປີດກອງປະຊຸມວຽກງານຕະຫຼາດທຶນໃນເດືອນກັນຍາ 2017.
2. ວຽກງານບັນຊີ: (1) ສືບຕໍ່ໃຫ້ສຳເລັດໃນການຂຶ້ນແຜນງົບປະມານ ປະຈຳປີ 2017 ຕາມກອງປະຊຸມສະພາບໍລິຫານ. (2) ກະກຽມໃຫ້ແກ່ການກວດສອບ ປະຈຳປີ 2016. (3) ກະກຽມໃຫ້ແກ່ການຈັດສຳມະນາວຽກງານມາດຕະຖານບັນຊີສາກົນຮ່ວມກັບບໍລິສັດກວດສອບພາຍນອກ (IFRS).

3. ກອງທຶນປົກປ້ອງຜູ້ຝາກເງິນກະກຽມຜ່ານຮ່າງດຳລັດວ່າດ້ວຍການປົກປ້ອງເງິນຝາກ ໃນກອງປະຊຸມລັດຖະບານ ໃນເດືອນມີນາ 2017.

## III. ວຽກງານທີ່ຕ້ອງໄດ້ສືບຕໍ່ຈັດຕັ້ງປະຕິບັດ

1. ດ້ານວຽກງານແນວຄິດການເມືອງ: ແມ່ນມີຄວາມສະຫງົບປົກກະຕິ; ໄດ້ມີການປັບປຸງກົງຈັກການຈັດຕັ້ງຈຳນວນໜຶ່ງຈາກບັນດາກົມ ແລະ ທະນາຄານທຸລະກິດລັດ ຊຶ່ງເຫັນໄດ້ຈາກທາງສຽງຈົ່ມວ່າກໍ່ມີບໍ່ຫລາຍ ແລະ ສາມາດຄວບຄຸມໄດ້ ເປັນຕົ້ນ: ກທປ, ສຕຟງ, ກົມເງິນຕາ, BCEL, LDB ແລະ APB.
2. ສຳລັບເນື້ອໃນທີ່ໄດ້ຮັບການລາຍງານຈາກບັນດາກົມກ່ຽວກັບການຈັດກອງປະຊຸມຕ່າງໆ ເປັນຕົ້ນ: ກອງປະຊຸມຄະນະນຳ ທຫລ ແລະ ຄະນະກົມ, ກອງປະຊຸມລະດັບຊາດ ແມ່ນເພີ່ມເຕີມໃສ່ບົດລາຍງານຕື່ມ.
3. ຕິດພັນກັບວຽກພັກ: (1) ເອົາໃຈໃສ່ວຽກງານປະເມີນໜ່ວຍພັກແຂງ-ຮູ້ນຳພາຮອບດ້ານ ໃຫ້ສຳເລັດເດືອນມີນາ 2017 ແລະ ສາມາດຜ່ານຄະນະປະຈຳເດືອນເມສາ 2017. (2) ຄົ້ນຄວ້າເປົ້າໝາຍຮຽນລະບຽບ, ເລື່ອນມະຫາຊົນກ້າວໜ້າຂຶ້ນເປັນສະມາຊິກສຳຮອງ, ເລື່ອນສະມາຊິກສຳຮອງຂຶ້ນເປັນສົມບູນ. (3) ສືບຕໍ່ກວດກາຄືນໃນການຈັດກອງປະຊຸມໜ່ວຍພັກ ເຊິ່ງໃນໄລຍະຜ່ານມາແມ່ນ 3 ປີໃດ ແມ່ນຕ້ອງໄດ້ຈັດຕັ້ງປະຕິບັດ.
4. ວຽກງານຕິດພັນກົມຈັດຕັ້ງແລະພະນັກງານ: (1) ຮີບຮ້ອນຄົ້ນຄວ້າບຸກຄະລາກອນສະໜອງໃຫ້ບັນດາກົມທີ່ມີຄວາມຕ້ອງການດ່ວນ ແລະ ລາຍງານຂັ້ນເທິງພາຍໃນເດືອນມີນາ 2017. (2) ກະກຽມຈັດກອງປະຊຸມຜັນຂະຫຍາຍວຽກງານຈັດຕັ້ງແລະພະນັກງານ. (3) ກະກຽມແຜນທີ່ຈະແລກປ່ຽນກັບທະນາຄານແຫ່ງລັດ ສສ.ຫວຽດນາມ ກ່ຽວກັບວຽກງານຄຸ້ມຄອງພະນັກງານ.
5. ກະກຽມກອງປະຊຸມວຽກງານກວດກາປະຈຳປີ 2016 ແລະ ກະກຽມຈັດຕັ້ງປະຕິບັດການກວດກາຄືນບັນຊີຊັບສິນບັດຂອງພະນັກງານພາຍໃນຂະແໜງການທະນາຄານ.
6. ວຽກງານຕິດພັນກັບຫ້ອງການ: (1) ກະກຽມຄວາມພ້ອມດ້ານສຳນັກງານ ແລະ ອຸປະກອນຮັບໃຊ້ວຽກງານຫ້ອງການໃນພິທີເປີດສາຂາ ທຫລ ຊຽງແຂວງ ຕາມແຜນແມ່ນຫຼັງປີໃໝ່ລາວ ປະຈຳປີ 2017. (2) ກະກຽມສະໜອງອຸປະກອນໃນການຮັບໃຊ້ວຽກງານຫ້ອງການ ໃຫ້ແກ່ການມາກວດກາວຽກງານ AML ຈາກ 20 ປະເທດ ໃນເດືອນພຶດສະພາ 2017 ແລະ ເພື່ອອອກຈາກບັນຊີສີເທົາ ໃນເດືອນມິຖຸນາ 2017. (3) ໃຫ້ຄົ້ນຄວ້າແກ້ໄຂຕຶກ ທຫລ ສາຂາ ຫຼວງພະບາງຫຼັງເກົ່າ ແລະ ການເກັບໜີ້ສິນເສັ້ນທາງ 450.
7. ວຽກງານຕິດພັນກັບການປັບປຸງ ທະນາຄານພັດທະນາລາວ ແລະ ທະນາຄານສົ່ງເສີມກະສິກຳ: (1) ໃຫ້ທັງສອງທະນາຄານ ຮີບຮ້ອນຂຶ້ນແຜນການຕີລາຄາການເຄື່ອນໄຫວພະນັກງານພາຍໃນທະນາຄານຂອງຕົນແຕ່ຂັ້ນບໍລິຫານ ຈົນເຖິງຂັ້ນວິຊາການ ນັບແຕ່ສູນກາງຮອດທ້ອງຖິ່ນໃຫ້ສຳເລັດໂດຍໄວ. (2) ສຳລັບທະນາຄານສົ່ງເສີມກະສິກຳຈະໄດ້ປະຕິຮູບທະນາຄານເປັນທະນາຄານຮ່ວມທຶນ ກັບ ສະຫະກອນສິນເຊື່ອໄຮນາຂອງ ສປ.ຈີນ. (3) ທະນາຄານພັດທະນາລາວ ໃຫ້ສຳເລັດໃນການພັດທະນາໂຄງການທັນເປັນທັນສະໄໝ ຂອງທະນາຄານດັ່ງກ່າວ ຈຳນວນ 3 ໂຄງການ ຕົ້ນເດືອນເມສາ 2017 ຕາມທີ່ກຳນົດໄວ້.
8. ວຽກງານ 3 ອົງການຈັດຕັ້ງມະຫາຊົນ: ຊາວໜຸ່ມ, ແມ່ຍິງ ແລະ ກຳມະບານ ແມ່ນໃຫ້ເຄື່ອນໄຫວຢ່າງເປັນປົກກະຕິ.

ກອງປະຊຸມໄດ້ປິດລົງໃນເວລາ 10:30 ໂມງ ຂອງພາກເຊົ້າວັນດຽວກັນ.

ປະທານກອງປະຊຸມ

ລຳວົງ ທົບພະວົງ

ຜູ້ບັນທຶກກອງປະຊຸມ

ພອນສະໄໝ ພະໄຊ